# ກະຊວງພາຍໃນ

ແຜນງານປັບປຸງບູລະນະການປົກຄອງແຫ່ງຊາດ 2011 - 2015

## <u>ບົດແນະນຳ</u>

## ການຈັດຕັ້ງປະຕິບັດທຶນປັບປຸງບູລະນະການປົກຄອງ

## ເພື່ອການພັດທະນາຂີດຄວາມສາມາດ ແລະ ທັນເປັນທັນສະໄໝ

## (ທຶນ ປປຄ)

## GPAR Capacity Development and Modernization Fund

## (GPAR CADEM Fund)

# ສຳລັບສົກປີ 2016

ສະໜັບສະໜູນໂດຍ:

# ຄໍານໍາ

ແຜນງານປັບປຸງບູລະນະການປົກຄອງແຫ່ງຊາດ (ແຜນງານ ປປຄຊ) ຊຶ່ງ ມີໄລຍະການຈັດຕັ້ງປະຕິບັດແຕ່ ປີ 2011-2016 ແລະ ຄຸ້ມຄອງໂດຍກະຊວງພາຍໃນ. ຈຸດປະສົງຂອງແຜນງານແມ່ນ ເພື່ອແນໃສ່ການສ້າງຂີດຄວາມສາມາດໃຫ້ແກ່ອົງການຈັດຕັ້ງລັດໃນການສ້າງແຜນຍຸດທະສາດ, ການຄຸ້ມຄອງ-ບໍລິຫານ ແລະ ການຕິດຕາມ-ກວດກາ ໂດຍສົ່ງເສີມການບໍລິຫານຂອງລັດໃຫ້ມີປະສິດທິພາບ, ມີຄວາມຮັບຜິດຊອບ, ໂປ່ງໃສ ແລະ ສາມາດກວດສອບໄດ້. ແຜນງານ ປປຄຊ ໄດ້ຮັບການສະໜັບສະໜູນທັງທາງດ້ານການເງິນ ແລະ ດ້ານວິຊາການຈາກບັນດາຄູ່ຮ່ວມພັດທະນາ ເປັນຕົ້ນແມ່ນ: ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ອົງການກອງທຶນເພື່ອການພັດທະນາຂອງອົງການສະຫະປະຊາຊາດ (UNCDF), ອົງການຮ່ວມມືເພື່ອການພັດທະນາຂອງປະເທດສະວິດເຊີແລນ (SDC), ລັດຖະບານສາທາລະນະລັດ ເກົາຫຼີ, ລັດຖະບານລຸກຊໍາບວກ ແລະ ອົງການຄູ່ຮ່ວມພັດທະນາອື່ນໆ.

ທຶນປັບປຸງບູລະນະການປົກຄອງເພື່ອການພັດທະນາຂີດຄວາມສາມາດແລະທັນເປັນທັນສະໄໝ ຂຽນຫຍໍ້ວ່າ: ທຶນ ປປຄ (GPAR CADEM Fund) ແມ່ນອົງປະກອບໜຶ່ງທີ່ສໍາຄັນຂອງແຜນງານ ປປຄຊ ເພື່ອສະໜັບສະໜູນໃຫ້ແກ່ເປົ້າໝາຍປັບປຸງບູລະນະການປົກຄອງກໍຄືການບໍລິຫານລັດຢູ່ໃນບັນດາກະຊວງ-ອົງການໃນຂັ້ນສູນກາງ ແລະ ທ້ອງຖິ່ນ. ທຶນ ປປຄ ແມ່ນທຶນຂະໜາດນ້ອຍ ເພື່ອສະໜັບສະໜູນໃຫ້ແກ່ອົງການຈັດຕັ້ງລັດໃນການຈັດຕັ້ງປະຕິບັດນະໂຍບາຍຂອງພັກ-ລັດ ໃນໄລຍະໃໝ່, ການຄົ້ນຄວ້າ-ປັບປຸງກົນໄກ, ລະບົບການບໍລິຫານຂອງລັດ ແລະ ການປັບປຸງຄຸນນະພາບການບໍລິການຂອງລັດ ຢູ່ ສປປ ລາວ ລວມທັງການສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍໃນຂົງເຂດການປົກຄອງ. ພ້ອມດຽວກັນນີ້ກໍເປັນການປະຕິບັດຕາມເນື້ອໃນຈິດໃຈຂອງຖະແຫຼງການວຽງຈັນກ່ຽວກັບການນໍາໃຊ້ທຶນການຊ່ວຍເຫຼືອໃຫ້ມີປະສິດທິຜົນ ໂດຍໃຫ້ສອດຄ່ອງກົມກຽວກັບນະໂຍບາຍ ແລະ ແຜນພັດທະນາຂອງລັດຖະບານ ແລະ ມີຄວາມຮັບຜິດຊອບຮ່ວມກັນລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນງານມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງພາຍໃນ, ແຜນງານ ປປຄຊ ເຊື່ອໝັ້ນວ່າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບົດຮຽນທີ່ດີໂດຍຜ່ານທຶນ ປປຄ ຈະສົ່ງຜົນໃຫ້ມີການບໍລິການທີ່ດີຂຶ້ນ, ດຶງດູດໃຫ້ບັນດາຄູ່ຮ່ວມພັດທະນາສືບຕໍ່ໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດແນວຄວາມຄິດ ແລະ ການປະດິດສ້າງໃໝ່ໃຫ້ມີຜົນປະໂຫຍດຕໍ່ສ່ວນລວມຫລາຍຂຶ້ນ.

ຫວັງຢ່າງຍິ່ງວ່າ, ບົດແນະນໍາສະບັບນີ້ຈະສາມາດເປັນຄູ່ມືແນະນໍາທີ່ດີ ແລະ ສ້າງຄວາມເຂົ້າໃຈໃຫ້ແກ່ບັນດາທ່ານກ່ຽວກັບຂະບວນການຄັດເລືອກໂຄງການທີ່ຈະໄດ້ຮັບການສະໜັບສະໜູນຈາກທຶນ ປປຄ ແລະ ຫວັງວ່າທຶນນີ້ຈະໄດ້ຮັບຄວາມສົນໃຈຈາກບັນດາທ່ານ.

ທີ່ ນະຄອນຫຼວງວຽງຈັນ, 10 ມິຖຸນາ 2015

ລັດຖະມົນຕີຊ່ວຍວ່າການກະຊວງພາຍໃນ
ປະທານສະພາບໍລິຫານແຜນງານ ປປຄຊ

ຄໍາມູນ ວິພົງໄຊ

**ສາລະບານ**


1. ພາກສະເໜີ ........ 3
2. ຂອບເຂດຂອງທຶນ ........ 3
3. ການຄຸ້ມຄອງ ........ 4
   3.1. ຄະນະກຳມະການຄຸ້ມຄອງທຶນ ........ 4
   3.2. ໜ້າທີ່ຮັບຜິດຊອບຂອງຄະນະກຳມະການຄຸ້ມຄອງທຶນ ........ 4
   3.3. ທີມງານດ້ານວິຊາການ ........ 5
   3.4. ໜ້າທີ່ຮັບຜິດຊອບຂອງທີມງານດ້ານວິຊາການ ........ 5
4. ເງື່ອນໄຂໃນການສະເໜີຂໍທຶນ ........ 6
   4.1. ອົງການຈັດຕັ້ງທີ່ມີເງື່ອນໄຂໄດ້ຮັບທຶນ ........ 6
   4.2. ຂົງເຂດຂອງໂຄງການທີ່ສາມາດໄດ້ຮັບທຶນ ........ 6
   4.3. ຂະໜາດຂອງທຶນ ປປຄ ........ 6
   4.4. ການສະໜັບສະໜູນດ້ານອຸປະກອນ ........ 6
   4.5. ໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການ ........ 6
5. ເງື່ອນໄຂທີ່ບໍ່ໄດ້ຮັບທຶນ ປປຄ ........ 7
6. ຂັ້ນຕອນໃນການສະເໜີຂໍທຶນ ........ 7
   6.1. ການສະເໜີບົດສະເໜີໂຄງການ ........ 8
   6.2. ການປະເມີນບົດສະເໜີໂຄງການ ........ 8
   6.3. ການເລືອກເຟັ້ນບົດສະເໜີໂຄງການ ........ 8
7. ການນຳໃຊ້ທຶນ ແລະ ຂັ້ນຕອນການສະໜອງທຶນ ........ **11**
8. ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການ ........ 11
9. ການຕິດຕາມ-ກວດກາ ແລະ ປະເມີນຜົນ ........ 13
10. ບັນຊີ ແລະ ການກວດສອບບັນຊີ ........ 12

## 1. ພາກສະເໜີ

ແຜນງານປັບປຸງບູລະນະການປົກຄອງແຫ່ງຊາດ ຫຼື ເອີ້ນຫຍໍ້ວ່າ: "ແຜນງານ ປປຄຊ" ແມ່ນ ແຜນງານຂອງລັດຖະບານ, ເຊິ່ງກະຊວງພາຍໃນເປັນໃຈກາງໃນການປະສານງານ ແລະ ຄຸ້ມຄອງບໍລິຫານ. ຈຸດປະສົງ ຂອງການສ້າງຕັ້ງແຜນງານ ປປຄຊ ແມ່ນແນໃສ່ສ້າງຄວາມສາມາດໃນການສ້າງແຜນຍຸດທະສາດ, ການຄຸ້ມຄອງ-ບໍລິຫານ ແລະ ການຕິດຕາມ-ກວດກາ ເພື່ອເຮັດໃຫ້ການສະໜອງການບໍລິການຂອງລັດ ມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້. ພ້ອມນີ້ຍັງເປັນການສົ່ງເສີມການຜັນຂະຫຍາຍບົດຮຽນ, ວິທີການຈັດຕັ້ງປະຕິບັດທີ່ດີ, ສົ່ງເສີມການຄົ້ນຄວ້າ ແລະ ຫົວຄິດປະດິດສ້າງໃນວຽກງານການປັບປຸງບູລະນະການປົກຄອງ ແລະ ການບໍລິການຂອງລັດ.

ທຶນປັບປຸງບູລະນະການປົກຄອງເພື່ອພັດທະນາຂີດຄວາມສາມາດແລະຫັນເປັນທັນສະໄໝ ຫຼື ເອີ້ນຫຍໍ້ວ່າ: "ທຶນ ປປຄ" ແມ່ນໂຄງການຍ່ອຍອັນໜຶ່ງທີ່ສຳຄັນຂອງແຜນງານ ປປຄຊ. ທຶນດັ່ງກ່າວ ແມ່ນອົງປະກອບໜຶ່ງໃນການສ້າງຄວາມເຂັ້ມແຂງແກ່ອົງການບໍລິຫານລັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ປັບປຸງການບໍລິການ. ຈຸດປະສົງຕົ້ນຕໍຂອງທຶນ ປປຄ ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນງານຂອງລັດຖະບານທີ່ພົວພັນກັບການປັບປຸງບູລະນະການປົກຄອງ ແລະ ການບໍລິການຂອງລັດ. ທຶນດັ່ງກ່າວຈະຊຸກຍູ້ໃຫ້ບັນລຸຕາມເນື້ອໃນຈິດໃຈຂອງຖະແຫຼງການວຽງຈັນກ່ຽວກັບການນຳໃຊ້ທຶນການຊ່ວຍເຫຼືອໃຫ້ມີປະສິດທິຜົນ ໂດຍໃຫ້ສອດຄ່ອງ ແລະ ກົມກຽວກັບນະໂຍບາຍ ແລະ ແຜນພັດທະນາຂອງລັດຖະບານ ແລະ ມີຄວາມຮັບຜິດຊອບຮ່ວມກັນລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ. ທຶນ ປປຄ ຈະໃຫ້ການສະໜັບສະໜູນແກ່ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດໃນໄລຍະໃໝ່ ແນໃສ່ປັບປຸງການບໍລິຫານລັດທຸກຂັ້ນ ເພື່ອການບໍລິການຂອງລັດທີ່ມີຄຸນນະພາບ.

## 2. ຂອບເຂດຂອງທຶນ

ຂອບເຂດຂອງທຶນ ປປຄ ແມ່ນແນໃສ່ເພື່ອຊ່ວຍບັນດາອົງການຈັດຕັ້ງລັດທັງຂັ້ນສູນກາງ ແລະ ທ້ອງຖິ່ນໃນການປັບປຸງການຈັດຕັ້ງ, ພັດທະນາຂີດຄວາມສາມາດຂອງອົງການຈັດຕັ້ງ ແລະ ບຸກຄະລາກອນ, ຄົ້ນຄວ້າ, ຈັດຕັ້ງປະຕິບັດນະໂຍບາຍໃໝ່ທີ່ປະກອບສ່ວນເຂົ້າໃນການປັບປຸງບູລະນະການປົກຄອງ ແລະ ການບໍລິການຂອງລັດໃຫ້ດີຂຶ້ນ.

ທຶນ ປປຄ ຈະໃຫ້ການສະໜັບສະໜູນບັນດາກິດຈະກຳທີ່ກຳນົດຂຶ້ນເພື່ອ:

- ການຈັດຕັ້ງປະຕິບັດນະໂຍບາຍຂອງພັກ-ລັດໃນໄລຍະໃໝ່ ເຊັ່ນ: ການຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ເລກທີ 03/ກມສພ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ຫຼື ວຽກງານ 3 ສ້າງ.
- ພັດທະນາຂີດຄວາມສາມາດໃນຂົງເຂດການປົກຄອງ/ການບໍລິຫານລັດທີ່ສາມາດປະກອບສ່ວນໃຫ້ແກ່ການປັບປຸງການປົກຄອງ ແລະ ການບໍລິການຂອງລັດ;

- ຄົ້ນຄວ້າ ແລະ ທົດລອງຈັດຕັ້ງປະຕິບັດແນວຄວາມຄິດ ຫຼື ການປະດິດສ້າງໃໝ່ແນໃສ່ປັບປຸງລະບົບການບໍລິການໃຫ້ດີຂຶ້ນ;
- ຜັນຂະຫຍາຍບົດຮຽນ ແລະ ວິທີການຈັດຕັ້ງປະຕິບັດທີ່ດີ ໃນວຽກງານການປັບປຸງການປົກຄອງ/ການບໍລິຫານລັດ;
- ປະເມີນ, ຖອດຖອນ, ແລກປ່ຽນບົດຮຽນ, ປະສົບການໃນການຈັດຕັ້ງປະຕິບັດການທົດລອງວຽກງານ ການປັບປຸງການປົກຄອງ/ການບໍລິຫານລັດ (ໂດຍປະສານສົມທົບກັບວຽກງານຂອງໜ່ວຍງານວິຊາການ ໃນຂະແໜງການຕ່າງໆຂອງລັດຖະບານ - Joint Sector Working Group).
- ສົ່ງເສີມການຈັດຕັ້ງປະຕິບັດວຽກງານທີ່ເປັນບັນຫາກວມລວມທຸກຂະແໜງການ (Cross cutting issues) ເຊັ່ນ: ວຽກງານສົ່ງເສີມບົດບາດຍິງ-ຊາຍ, ການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທຳ-ສັງຄົມ ແລະ ອື່ນໆ.

## 3. ການຄຸ້ມຄອງ

ທຶນປັບປຸງບູລະນະການປົກຄອງເພື່ອການພັດທະນາຂີດຄວາມສາມາດແລະທັນເປັນທັນສະໄໝ (ທຶນ ປປຄ) ຈະຄຸ້ມຄອງໂດຍຄະນະກຳມະການຄຸ້ມຄອງທຶນ ແລະ ທີມງານວິຊາການ ດັ່ງລຸ່ມນີ້:

### 3.1. ຄະນະກຳມະການຄຸ້ມຄອງທຶນ

ສະມາຊິກຂອງຄະນະກຳມະການຄຸ້ມຄອງທຶນຈະປະກອບມາຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

- ລັດຖະມົນຕີຊ່ວຍວ່າການກະຊວງພາຍໃນ (ເປັນປະທານ);
- ຜູ້ບໍລິຫານແຜນງານ ປປຄຊ;
- ຜູ້ຕາງໜ້າຈາກກະຊວງການເງິນ;
- ຜູ້ຕາງໜ້າຈາກກະຊວງແຜນການ ແລະ ການລົງທຶນ;
- ຜູ້ຕາງໜ້າຈາກອົງການຄູ່ຮ່ວມພັດທະນາຈຳນວນໜຶ່ງຕາມເງື່ອນໄຂ (ເຊັ່ນ: ອົງການ UNDP, UNCDF, SDC)

### 3.2. ໜ້າທີ່ຮັບຜິດຊອບຂອງຄະນະກຳມະການຄຸ້ມຄອງທຶນ

ຄະນະກຳມະການຄຸ້ມຄອງທຶນ ປປຄ ມີໜ້າທີ່ຮັບຜິດຊອບ ດັ່ງລຸ່ມນີ້:

- ຮັບຮອງບົດແນະນຳ, ເຄື່ອງມື ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດທຶນ;
- ຮັບຮອງປະເພດໂຄງການທີ່ມີເງື່ອນໄຂໄດ້ຮັບທຶນ;
- ຮັບຮອງໂຄງການທີ່ໄດ້ຮັບທຶນ ໂດຍອີງຕາມເງື່ອນໄຂການຄັດເລືອກ ແລະ ສອດຄ່ອງກັບຖະແຫຼງການວຽງຈັນ (Vientiane Declaration), ການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ (Official Development Assistance - ODA);
- ໃຫ້ຄຳແນະນຳກ່ຽວກັບການຄຸ້ມຄອງທຶນ;
- ຮັບຮອງເອົາການປັບປຸງບົດແນະນຳຄືນໃໝ່ໃນແຕ່ລະໄລຍະເພື່ອກຳນົດເອົາບູລິມະສິດໃໝ່ ຫຼື ເພື່ອໃຫ້ມີຄວາມແທດເໝາະກັບສະພາບການຕົວຈິງ;

- ແລກປ່ຽນຂໍ້ມູນ-ຂ່າວສານກ່ຽວກັບການຈັດຕັ້ງປະຕິບັດທຶນກັບອົງການຈັດຕັ້ງອື່ນໆ;
- ພິຈາລະນາຄັດເລືອກເອົາບົດຮຽນ ແລະ ພຶດຕິກຳຕົວຈິງທີ່ດີ ເພື່ອໂຄສະນາເຜີຍແຜ່ໃຫ້ອົງການຈັດຕັ້ງອື່ນໆ.

### 3.3. ທີມງານດ້ານວິຊາການ

ທີມງານດ້ານວິຊາການ (Technical Working Group) ປະກອບດ້ວຍຜູ້ຕາງໜ້າຈາກກະຊວງພາຍໃນ, ຕາງໜ້າຈາກອົງການຜູ້ໃຊ້ທຶນ (ຜູ້ຕິດຕາມແຜນງານ) ແລະ ພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

- ຜູ້ບໍລິຫານແຜນງານ ປປກຊ ຫຼື ຫົວໜ້າຫ້ອງການກອງເລຂາແຜນງານ (ເປັນປະທານ);
- ຜູ້ຕາງໜ້າ (ຂັ້ນກົມໃນນາມຫົວໜ້າທີມງານປະສານງານ) ຈາກແຕ່ລະກົມ, ສະຖາບັນ ແລະ ຫ້ອງການກະຊວງພາຍໃນ;
- ຜູ້ຕາງໜ້າ (ຂັ້ນກົມ ຫຼື ພະແນກ) ຈາກກະຊວງການເງິນ;
- ຜູ້ຕາງໜ້າ (ຂັ້ນກົມ ຫຼື ພະແນກ) ຈາກກະຊວງແຜນການ ແລະ ການລົງທຶນ;
- ຜູ້ຕາງໜ້າ (ຜູ້ຕິດຕາມແຜນງານ) ຈາກອົງການສະຫະປະຊາຊາດເພື່ອການພັດທະນາ (UNDP);
- ຜູ້ຕາງໜ້າ (ຜູ້ຕິດຕາມແຜນງານ) ຈາກອົງການຄູ່ຮ່ວມພັດທະນາຈຳນວນໜຶ່ງ ຕາມເງື່ອນໄຂ (ເຊັ່ນ: ອົງການ UNCDF, SDC)
- ພະນັກງານຫ້ອງການກອງເລຂາແຜນງານ ປປກຊ

### 3.4. ໜ້າທີ່ຮັບຜິດຊອບຂອງທີມງານດ້ານວິຊາການ

ໜ້າທີ່ຮັບຜິດຊອບຂອງທີມງານດ້ານວິຊາການມີດັ່ງນີ້:

- ຄົ້ນຄວ້າສ້າງ, ປັບປຸງບົດແນະນຳການຈັດຕັ້ງປະຕິບັດ ແລະ ນຳສະເໜີຄະນະກຳມະການຄຸ້ມຄອງທຶນ;
- ດຳເນີນການປະກາດທຶນໃຫ້ແກ່ອົງການຈັດຕັ້ງລັດ;
- ປະເມີນຕີລາຄາ, ຄັດເລືອກເອົາບົດສະເໜີໂຄງການທີ່ມີຄວາມເໝາະສົມ ເພື່ອສະເໜີຄະນະກຳມະການຄຸ້ມຄອງທຶນພິຈາລະນາ ແລະ ຮັບຮອງ;
- ແນະນຳອົງການທີ່ໄດ້ຮັບທຶນໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ;
- ສະໜັບສະໜູນທາງດ້ານວິຊາການ, ຕິດຕາມ-ກວດກາການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນ;
- ວິເຄາະ, ແນະນຳ, ກວດກາ ແລະ ປັບປຸງບົດລາຍງານການຈັດຕັ້ງປະຕິບັດໂຄງການ ກໍຄືບົດລາຍງານການເງິນ ເພື່ອສະເໜີຫາຄະນະກຳມະການຄຸ້ມຄອງທຶນ;
- ກຳນົດເອົາບົດຮຽນ, ວິທີການຈັດຕັ້ງປະຕິບັດທີ່ດີ ແລະ ສະເໜີຄະນະກຳມະການຄຸ້ມຄອງທຶນອະນຸມັດ ເພື່ອໂຄສະນາເຜີຍແຜ່ໃຫ້ອົງການຈັດຕັ້ງອື່ນໆ.

## 4. ເງື່ອນໄຂໃນການສະເໜີຂໍທຶນ

### 4.1. ອົງການຈັດຕັ້ງທີ່ມີເງື່ອນໄຂໄດ້ຮັບທຶນ

ບັນດາອົງການຈັດຕັ້ງລັດທຸກຂັ້ນທັງຢູ່ສູນກາງ ແລະ ທ້ອງຖິ່ນ ລວມທັງອົງການຈັດຕັ້ງມະຫາຊົນ ແລະ ສະຖາບັນການສຶກສາ/ສະຖາບັນຄົ້ນຄວ້າຂອງລັດ.

### 4.2. ຂົງເຂດຂອງໂຄງການທີ່ສາມາດໄດ້ຮັບທຶນ

- ການຜັນຂະຫຍາຍນະໂຍບາຍ 3 ສ້າງຂອງລັດຖະບານ (ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ);
- ການປັບປຸງການຈັດຕັ້ງ ແລະ ລະບົບບໍລິຫານລັດຂັ້ນສູນກາງ ແລະ ທ້ອງຖິ່ນ
- ການສ້າງ, ປັບປຸງກົນໄກ, ລະບຽບການກ່ຽວກັບການບໍລິຫານ ແລະ ການບໍລິການຂອງລັດ
- ການຄຸ້ມຄອງ ແລະ ພັດທະນາບຸກຄະລາກອນ;
- ວຽກງານອື່ນໆທີ່ພົວພັນກັບການປັບປຸງການບໍລິການຂອງລັດ ເຊັ່ນ: ສູນບໍລິການຜ່ານປະຕູດຽວ, ແລະ ຮູບແບບການບໍລິການອື່ນໆ;
- ການປູກຈິດສຳນຶກໃນການປະຕິບັດລະບຽບກົດໝາຍ ເຊັ່ນ: ການປະຕິບັດລະບຽບກ່ຽວກັບການຈໍລະຈອນ ແລະ ອື່ນໆ
- ການປັບປຸງວຽກງານການວາງແຜນ ແລະ ງົບປະມານ;
- ການປັບປຸງວຽກງານການຄຸ້ມຄອງການເງິນ;
- ວຽກງານທີ່ເປັນບັນຫາກວມລວມທຸກຂະແໜງການ ແລະ ສັງຄົມ (Cross cutting issues) ເຊັ່ນ: ວຽກງານສົ່ງເສີມບົດບາດຍິງ-ຊາຍ, ການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທຳ ແລະ ອື່ນໆ.

### 4.3. ຂະໜາດຂອງທຶນ ປປຄ

ການສະໜັບສະໜູນທຶນໃຫ້ແຕ່ລະໂຄງການມີເພດານສູງສຸດບໍ່ເກີນ 80.000.000 ກີບ (ແປດສິບລ້ານກີບ). ອົງການຈັດຕັ້ງທີ່ສະເໜີຂໍທຶນສາມາດປະກອບສ່ວນສົມທົບຕາມຄວາມສາມາດຂອງການຈັດຕັ້ງ ເພື່ອປະກອບເຂົ້າໃນການຈັດຕັ້ງປະຕິບັດໂຄງການ ແລະ ເພື່ອຮັບປະກັນຄວາມຍືນຍົງແລະຕໍ່ເນື່ອງ.

### 4.4. ການສະໜັບສະໜູນດ້ານອຸປະກອນ

ທຶນ ປປຄ ຈະສຸມໃສ່ຊ່ວຍອົງການຈັດຕັ້ງໃນການຄົ້ນຄວ້າ, ປັບປຸງຂັ້ນຕອນ, ລະບຽບການ ແລະ ພັດທະນາຂີດຄວາມສາມາດໃຫ້ແກ່ພະນັກງານ-ລັດຖະກອນ ໂດຍຜ່ານການສະໜັບສະໜູນດ້ານວິຊາການ ແລະ ພັດທະນາຄວາມສາມາດໃຫ້ແກ່ຫ້ອງການທີ່ໄດ້ຮັບທຶນ. ດັ່ງນັ້ນ, ໃນການສະໜັບສະໜູນອຸປະກອນເພື່ອປະກອບເຂົ້າໃນການຈັດຕັ້ງປະຕິບັດໂຄງການແມ່ນກຳນົດບໍ່ໃຫ້ເກີນ 10% ຂອງງົບປະມານທັງໝົດຂອງໂຄງການທີ່ຈະໄດ້ຮັບການສະໜັບສະໜູນຈາກທຶນ ປປຄ. ອົງການຈັດຕັ້ງທີ່ໄດ້ຮັບທຶນຕ້ອງຮັບປະກັນໃຫ້ມີຊັບພະຍາກອນພຽງພໍເພື່ອຄຸ້ມຄອງ ແລະ ບຳລຸງຮັກສາອຸປະກອນໃຫ້ມີຄວາມຍືນຍົງ.

### 4.5. ໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການ

ໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການເລີ່ມແຕ່ **ເດືອນຕຸລາ 2015 ເຖິງ ມິຖຸນາ 2016**

## 5. ເງື່ອນໄຂທີ່ບໍ່ໄດ້ຮັບທຶນ ປປຄ

### 5.1 ອົງການທີ່ຈະບໍ່ໄດ້ຮັບທຶນ:

- ວິສະຫະກິດ (ລັດ ແລະ ເອກະຊົນ)
- ອົງການຈັດຕັ້ງທາງສັງຄົມ
- ອົງການທີ່ໄດ້ຮັບທຶນ ປປຄ ແລ້ວ 2 ຄັ້ງຕິດຕໍ່ກັນ

### 5.2 ປະເພດກິດຈະກຳທີ່ຈະບໍ່ໄດ້ຮັບທຶນ:

ທຶນ ປປຄ ຈະບໍ່ພິຈາລະນາບັນດາກິດຈະກຳທີ່ມີລັກສະນະລຸ່ມນີ້:

- ຈັດຊື້ອຸປະກອນ ຫຼື ພາຫະນະຮັບໃຊ້ວຽກງານການບໍລິຫານລັດໂດຍກົງ;
- ຈັດທັດສະນະສຶກສາຢູ່ພາຍໃນ ແລະ ຕ່າງປະເທດ;
- ການຈ່າຍເງິນເດືອນ, ເງິນອຸດໜູນໃຫ້ແກ່ພະນັກງານ-ລັດຖະກອນແລະຄ່າໃຊ້ຈ່າຍບໍລິຫານອື່ນໆ;
- ການກໍ່ສ້າງ ຫຼື ສ້ອມແປງ ພື້ນຖານໂຄງລ່າງ;

## 6. ຂັ້ນຕອນໃນການສະເໜີຂໍທຶນ

- ❖ <u>**ຂັ້ນສູນກາງ:**</u>

ຂັ້ນຕອນທີ 1: ບັນດາຫົວໜ່ວຍການຈັດຕັ້ງທີ່ສັງກັດຢູ່ກະຊວງ-ອົງການ ສາມາດຍື່ນບົດສະເໜີໂຄງການ ຕາມແບບຟອມທີ່ກຳນົດໃຫ້ ເຖິງຫ້ອງການຂອງກະຊວງ-ອົງການຂອງຕົນ.

ຂັ້ນຕອນທີ 2: ຫ້ອງການຂອງກະຊວງ-ອົງການ ຈະພິຈາລະນາຄົ້ນຄວ້າ, ຈັດບູລິມະສິດບົດສະເໜີໂຄງການຕາມເງື່ອນໄຂທີ່ຈະໄດ້ຮັບທຶນ ແລະ ເງື່ອນໄຂທີ່ບໍ່ໄດ້ຮັບທຶນທີ່ລະບຸໄວ້ໃນບົດແນະນຳສະບັບນີ້ຢ່າງຖີ່ຖ້ວນ ແລະ ຢັ້ງຢືນ ເພື່ອສົ່ງໃຫ້ຫ້ອງການກອງເລຂາແຜນງານ ປປຄຊ ຕາມກຳນົດເວລາ (ສູງສຸດບໍ່ເກີນ 2 ບົດສະເໜີໂຄງການ/ ກະຊວງ ຫຼື ອົງການ)

- ❖ <u>**ຂັ້ນທ້ອງຖິ່ນ:**</u>

ຂັ້ນຕອນທີ 1: ບັນດາຫົວໜ່ວຍການຈັດຕັ້ງທີ່ສັງກັດຢູ່ຂັ້ນແຂວງ ແລະ ເມືອງ ຈະຍື່ນບົດສະເໜີໂຄງການ ຕາມແບບຟອມທີ່ກຳນົດໃຫ້ ເຖິງພະແນກພາຍໃນຂອງແຂວງ (ພະແນກ/ຫ້ອງການໜຶ່ງ ສາມາດສົ່ງບົດສະເໜີໂຄງການໄດ້ 01 ໂຄງການ).

ຂັ້ນຕອນທີ 2: ພະແນກພາຍໃນຂັ້ນແຂວງ ຈະພິຈາລະນາຄົ້ນຄວ້າ, ຈັດບູລິມະສິດ ບົດສະເໜີໂຄງການ ຕາມເງື່ອນໄຂທີ່ຈະໄດ້ຮັບທຶນ ແລະ ເງື່ອນໄຂທີ່ບໍ່ໄດ້ຮັບທຶນທີ່ລະບຸໄວ້ໃນບົດແນະນຳສະບັບນີ້ຢ່າງຖີ່ຖ້ວນ. ຈາກນັ້ນ ພະແນກພາຍໃນຂັ້ນແຂວງຈະສົ່ງເຖິງຫ້ອງການກອງເລຂາ

ແຜນງານ ປປຄຊ ຕາມກຳນົດເວລາ, ສູງສຸດບໍ່ເກີນ 5 ບົດສະເໜີໂຄງການ/01 ແຂວງ (ທັງຂັ້ນແຂວງ ແລະ ຂັ້ນເມືອງ).

### 6.1. ການສົ່ງບົດສະເໜີໂຄງການ

ແຜນງານ ປປຄຊ, ກະຊວງພາຍໃນຈະປະກາດແຈ້ງການກ່ຽວກັບທຶນ ປປຄ ເຖິງອົງການຈັດຕັ້ງຕ່າງໆໄດ້ຮັບຮູ້ໃນເດືອນມິຖຸນາ ແລະຈະປິດຮັບຄຳຮ້ອງຂໍທຶນເບື້ອງຕົ້ນ ໃນວັນທີ 14 ສິງຫາ 2015. (ຫາກສົ່ງບົດສະເໜີໂຄງການມາເຖິງກະຊວງພາຍໃນຫຼັງຈາກໃນວັນທີ 14 ສິງຫາ 2015 ຈະບໍ່ຖືກພິຈາລະນາ)

ອົງການຈັດຕັ້ງທີ່ສົນໃຈສາມາດສົ່ງແບບຟອມບົດສະເໜີໂຄງການ (ທີ່ຄັດຕິດໃນບົດແນະນຳສະບັບນີ້) ເຖິງຫ້ອງການຂອງກະຊວງ-ອົງການ ຂອງຕົນ ຫຼື ພະແນກພາຍໃນຂັ້ນແຂວງຂອງຕົນພາຍໃນກຳນົດເວລາ.

### 6.2. ການປະເມີນບົດສະເໜີໂຄງການ

ທີມງານດ້ານວິຊາການຂອງທຶນ ປປຄ ຈະດຳເນີນການປະເມີນຕີລາຄາບັນດາບົດສະເໜີໂຄງການ ໂດຍອີງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ດັ່ງນີ້:

- ອົງການຈັດຕັ້ງທີ່ສະເໜີຂໍທຶນ ນອນຢູ່ໃນເງື່ອນໄຂໃນການຮັບທຶນ;
- ໂຄງການທີ່ສະເໜີຂໍທຶນ (ຈຸດປະສົງ ແລະ ເນື້ອໃນ) ນອນຢູ່ໃນເງື່ອນໄຂໃນການໄດ້ຮັບທຶນ;
- ຄາດຄະເນຜົນໄດ້ຮັບ ໄດ້ກຳນົດຢ່າງຈະແຈ້ງ, ມີລັກສະນະຕົວຈິງ ແລະ ສາມາດວັດແທກໄດ້;
- ງົບປະມານທີ່ນຳໃຊ້ ຢູ່ໃນເພດານທີ່ກຳນົດໄວ້ ແລະ ມີລັກສະນະສົມເຫດສົມຜົນ.

### 6.3. ການເລືອກເຟັ້ນບົດສະເໜີໂຄງການ

ທີມງານດ້ານວິຊາການຈະເລືອກເຟັ້ນບົດສະເໜີໂຄງການ ໂດຍໃຫ້ຄະແນນຕາມເງື່ອນໄຂທີ່ກຳນົດໄວ້. ພາຍຫຼັງສຳເລັດການເລືອກເຟັ້ນແລ້ວ, ຫ້ອງການກອງເລຂາແຜນງານ ປປຄຊ, ກະຊວງພາຍໃນຈະແຈ້ງເຖິງອົງການຈັດຕັ້ງ (ທີ່ບົດສະເໜີໂຄງການມີເງື່ອນໄຂພຽງພໍທີ່ຈະໄດ້ຮັບການຄັດເລືອກ) ເພື່ອກະກຽມເອກະສານເພີ່ມເຕີມ ແລະ ກຽມຈັດຕັ້ງປະຕິບັດກິດຈະກຳ.

ທີມງານສະໜັບສະໜູນດ້ານວິຊາການຈະປະເມີນຕີລາຄາບັນດາບົດສະເໜີໂຄງການອີງຕາມມາດຖານ-ເງື່ອນໄຂທີ່ກຳນົດໄວ້ ໂດຍຈະໃຫ້ຄະແນນແຕ່ລະບົດສະເໜີທັງດ້ານວິຊາການ ແລະ ການເງິນ (ການນຳໃຊ້ງົບປະມານເຂົ້າໃນໂຄງການ) ດັ່ງລາຍລະອຽດລຸ່ມນີ້:

**ມາດຖານ-ເງື່ອນໄຂຂອງການປະເມີນຕີລາຄາທາງດ້ານວິຊາການ = 80% ຂອງຄະແນນລວມທັງໝົດ**

| ມາດຖານ-ເງື່ອນໄຂ | ມາດຖານ-ເງື່ອນໄຂຂອງການປະເມີນຕີລາຄາ | ຄະແນນສູງສຸດ |
|---|---|---|
| 1 | ການປະເມີນກ່ຽວກັບບັນຫາ<br>- ອົງການຈັດຕັ້ງຮັບຮູ້ ແລະ ເຂົ້າໃຈບັນຫາ ຫຼື ຄວາມຫຍຸ້ງຍາກ ທີ່ກຳລັງປະເຊີນໃນປະຈຸບັນ; | 15 |

| | | |
|---|---|---|
| | - ອົງການຈັດຕັ້ງສາມາດກຳນົດວິທີການແກ້ໄຂບັນຫາໄດ້ຢ່າງເໝາະສົມ. | |
| 2 | ການປະເມີນກ່ຽວກັບເຫດຜົນພື້ນຖານ<br>- ໂຄງການທີ່ສະເໜີສາມາດຊຸກຍູ້ຫຼືສ້າງໃຫ້ມີກິດຈະກຳກ່ຽວກັບການປັບປຸງທີ່ດີຂຶ້ນ<br>- ໂຄງການທີ່ສະເໜີສາມາດປະກອບສ່ວນເຂົ້າໃນວຽກງານການປັບປຸງບູລະນະການປົກຄອງ | 15 |
| 3 | ການປະເມີນການອອກແບບໂຄງການ<br>- ການອອກແບບໂຄງການແມ່ນເພື່ອຜັນຂະຫຍາຍບົດຮຽນ/ວິທີການຈັດຕັ້ງປະຕິບັດທີ່ດີທີ່ມີໃນປະຈຸບັນ ແລະ ຢູ່ໃນມາດຕະຖານລະດັບຊາດ;<br>- ໂຄງການມີຜົນກະທົບ (ດ້ານດີ) ແລະ ສາມາດເຫັນຜົນໄດ້ໄວໃນຂົງເຂດການປັບປຸງຂອດການບໍລິການ;<br>- ຄາດຄະເນຜົນໄດ້ຮັບມີຄວາມຈະແຈ້ງ ແລະ ສາມາດວັດແທກໄດ້;<br>- ໂຄງການໄດ້ກຳນົດໃຫ້ເຫັນເຖິງການສົ່ງເສີມບົດບາດຍິງ-ຊາຍ;<br>- ໂຄງການສາມາດຈັດຕັ້ງປະຕິບັດພາຍໃນໄລຍະເວລາແລະງົບປະມານທີ່ກຳນົດໄວ້. | 15 |
| 4 | ການປະເມີນການຈັດຕັ້ງປະຕິບັດໂຄງການ<br>- ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານໂຄງການໄດ້ຖືກກຳນົດໄວ້ຢ່າງຈະແຈ້ງ;<br>- ອົງການຈັດຕັ້ງມີຄວາມສາມາດຄຸ້ມຄອງ-ບໍລິຫານໂຄງການທີ່ສະເໜີ (ດ້ານບຸກຄະລາກອນ, ໄລຍະເວລາ, ເຄື່ອງມື-ອຸປະກອນ, ທຶນສົມທົບ ແລະ ອື່ນໆ);<br>- ກົນໄກການປະສານງານກັບຂົງເຂດວຽກງານການປະຕິຮູບອື່ນໆໄດ້ກຳນົດໄວ້ຢ່າງຈະແຈ້ງ. | 15 |
| 5 | ການປະເມີນການຕິດຕາມ-ກວດກາ ແລະ ປະເມີນຜົນ<br>- ໂຄງການໄດ້ກຳນົດຂັ້ນຕອນ ແລະ ວິທີການຕິດຕາມ-ກວດກາແລະປະເມີນຜົນ;<br>- ໂຄງການໄດ້ກຳນົດຕົວຊີ້ວັດສຳລັບການຕິດຕາມ-ກວດກາແລະສາມາດວັດແທກໄດ້; ບັນດາຕົວຊີ້ວັດມີລັກສະນະຕົວຈິງ ແລະ ເຊື່ອມໂຍງກັບກິດຈະກຳແລ້ວ. | 15 |
| 6 | ການປະເມີນກ່ຽວກັບຄວາມຍືນຍົງ<br>- ໂຄງການມີທ່າແຮງສາມາດຜັນຂະຫຍາຍໄດ້;<br>- ອົງການຈັດຕັ້ງໄດ້ກຳນົດຄວາມຍືນຍົງຂອງຜົນສຳເລັດຂອງໂຄງການ. | 15 |
| 7 | ການປະເມີນກ່ຽວກັບຄວາມສ່ຽງ<br>- ສູງ<br>- ປານກາງ<br>- ຕ່ຳ | ສູງ = - 10<br>ປານກາງ = - 5<br>ຕ່ຳ = 0 |

**ມາດຖານ-ເງື່ອນໄຂຂອງການປະເມີນຕີລາຄາທາງດ້ານການເງິນ = 20% ຂອງຄະແນນລວມທັງໝົດ**

| ມາດຖານ-ເງື່ອນໄຂ | ມາດຖານ-ເງື່ອນໄຂຂອງການປະເມີນຕີລາຄາ | ຄະແນນສູງສຸດ |
|---|---|---|
| 1 | ງົບປະມານສຳລັບແຕ່ລະກິດຈະກຳມີຄວາມຈະແຈ້ງ | 5 |
| 2 | ງົບປະມານສົມເຫດສົມຜົນກັບກິດຈະກຳທີ່ຈະປະຕິບັດ,ການກຳນົດງົບປະມານສຳລັບແຕ່ລະກິດຈະກຳ ໄດ້ສະແດງໃຫ້ເຫັນການນຳໃຊ້ຊັບພະຍາກອນຢ່າງມີປະສິດທິຜົນ | 5 |
| 3 | ທຸກການໃຊ້ຈ່າຍຂອງໂຄງການຕ້ອງມີການກວດກາ ແລະ ມີລັກສະນະສົມເຫດສົມຜົນ | 5 |
| 4 | ການປະກອບສ່ວນ (ດ້ານທຶນ ແລະ ອຸປະກອນ) ຂອງການຈັດຕັ້ງຕາມຄວາມສາມາດ ຊຶ່ງລະບຸເປັນ % ຂອງງົບປະມານທັງໝົດຂອງໂຄງການ ແລະ ສາມາດຮັບປະກັນຄວາມຍືນຍົງ ແລະ ຕໍ່ເນື່ອງ | 5 |

ພາຍຫຼັງສຳເລັດການປະເມີນຕີລາຄາບົດສະເໜີໂຄງການແລ້ວ, ທີມງານດ້ານວິຊາການຈະຈັດລຽງອັນດັບບົດສະເໜີໂຄງການອີງຕາມຜົນຄະແນນ (ທັງດ້ານວິຊາການ ແລະ ການເງິນ) ແລະ ສະເໜີໃຫ້ຄະນະກຳມະການຄຸ້ມຄອງທຶນອະນຸມັດໂຄງການສຸດທ້າຍ.

### 6.5. ການແຈ້ງຜົນການຄັດເລືອກບົດສະເໜີໂຄງການທີ່ມີເງື່ອນໄຂໄດ້ຮັບທຶນ

ຫ້ອງການກອງເລຂາແຜນງານ ປປຄຊ ຈະແຈ້ງຜົນຂອງການຄັດເລືອກໃຫ້ອົງການທີ່ບົດສະເໜີໂຄງການມີເງື່ອນໄຂຈະໄດ້ຮັບທຶນ ແລະ ສະເໜີໃຫ້ປະຕິບັດເງື່ອນໄຂໃນການໄດ້ຮັບທຶນ. ອົງການ ຫຼື ຫ້ອງການໜຶ່ງຈະໄດ້ຮັບທຶນ ພຽງແຕ່ 01 ໂຄງການ.

## 7. ການນຳໃຊ້ທຶນ ແລະ ຂັ້ນຕອນການສະໜອງທຶນ

ໃນການນຳໃຊ້ທຶນໃຫ້ເນັ້ນໜັກໃສ່ເພື່ອຈັດຕັ້ງປະຕິບັດກິດຈະກຳ ແລະ ພັດທະນາຄວາມສາມາດໃຫ້ແກ່ການຈັດຕັ້ງ ແລະ ການປະຕິບັດໂຄງການ. ກໍລະນີທີ່ມີຄວາມຈຳເປັນຕ້ອງນຳໃຊ້ອຸປະກອນ ແລະ ເຄື່ອງມື ຊຶ່ງການຈັດຕັ້ງບໍ່ທັນມີອຸປະກອນເຄື່ອງມືກໍສາມາດຈັດຊື້ໄດ້ ແຕ່ບໍ່ເກີນ 10% ຂອງທຶນທີ່ໄດ້ຮັບຈາກທຶນ ປປຄ.

**ຂັ້ນຕອນການສະໜອງທຶນ:**

ອົງການ ສປຊ ເພື່ອການພັດທະນາ (UNDP) ຈະໂອນເງິນເຂົ້າໂຄງການພາຍໃຕ້ແຜນງານ ປປຄຊ, ຫຼັງຈາກນັ້ນງົບປະມານດັ່ງກ່າວ ຈະຖືກໂອນເຂົ້າໃນບັນຊີຂອງອົງການຈັດຕັ້ງທີ່ໄດ້ຮັບທຶນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ອົງການຈັດຕັ້ງທີ່ໄດ້ຮັບທຶນ ຈະຕ້ອງເປີດບັນຊີ-ກະແສລາຍວັນ (ເປັນສະກຸນເງິນກີບ) ຢູ່ທະນາຄານ ທີ່ມີຢູ່ໃນທ້ອງຖິ່ນຂອງຕົນໂດຍອອກຊື່ GPARCADEM2016 + ຊື່ອົງການຈັດຕັ້ງທີ່ໄດ້ຮັບທຶນ.

ການຄຸ້ມຄອງບັນຊີທະນາຄານດັ່ງກ່າວຈະມີພະນັກງານຈາກຫ້ອງການໆເງິນໃນຂັ້ນຕົນເຂົ້າຮ່ວມນຳ. ການເງິນຂອງກະຊວງ-ອົງການ/ພະແນກຂອງແຂວງ/ຫ້ອງການຂອງເມືອງ ຈະເປັນຜູ້ຂໍສະເໜີເປີດບັນຊີດັ່ງກ່າວ.

ໂຄງຮ່າງການສະໜອງທຶນແມ່ນສະແດງໃຫ້ເຫັນໃນແຜນພາບລຸ່ມນີ້:

<u>ຂັ້ນຕອນການສະໜອງທຶນ</u>




## 8. ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການ

ພາຍຫຼັງປະກາດຜົນການຄັດເລືອກແລ້ວ ອົງການທີ່ໄດ້ຮັບທຶນຈະຕ້ອງໄດ້ຮີບຮ້ອນແຕ່ງຕັ້ງຄະນະຮັບຜິດຊອບໂຄງການ ເພື່ອນຳພາການຈັດຕັ້ງປະຕິບັດກິດຈະກຳ ແລະ ຮັບປະກັນການນຳໃຊ້ງົບປະມານຢ່າງຖືກຕ້ອງໂປ່ງໃສ.

ຄະນະຮັບຜິດຊອບຈະປະກອບມີ:

- ຫົວໜ້າໂຄງການ ແມ່ນລະດັບຫົວໜ້າກົມ/ຫົວໜ້າພະແນກການຂັ້ນແຂວງ/ຫົວໜ້າຫ້ອງການຂັ້ນເມືອງ ເປັນຜູ້ຮັບຜິດຊອບລວມ
- ຮອງຫົວໜ້າໂຄງການ ແມ່ນລະດັບຮອງຫົວໜ້າກົມ/ຮອງຫົວໜ້າພະແນກການຂັ້ນແຂວງ/ຮອງຫົວໜ້າຫ້ອງການຂັ້ນເມືອງ
- ຜູ້ກວດກາ (ສາມາດແຕ່ງຕັ້ງໄດ້ຫຼາຍກວ່າ 1 ທ່ານ) ແມ່ນ ລະດັບຮອງຫົວໜ້າກົມ/ຮອງຫົວໜ້າພະແນກການຂັ້ນແຂວງ/ຮອງຫົວໜ້າຫ້ອງການຂັ້ນເມືອງ

- ຜູ້ປະສານງານ (ສາມາດແຕ່ງຕັ້ງໄດ້ຫຼາຍກວ່າ 1 ທ່ານ) ແມ່ນລະດັບຫົວໜ້າພະແນກ ຂອງກົມ/ຫົວໜ້າຂະແໜງ
- ຜູ້ຮັບຜິດຊອບການເງິນ ແລະ ບັນຊີ (ແຕ່ງຕັ້ງໄດ້ຫຼາຍກວ່າ 1 ທ່ານ) ແມ່ນພະນັກງານການເງິນຂອງກະຊວງ/ພະແນກຂັ້ນແຂວງ/ຫ້ອງການຂັ້ນເມືອງ

## 9. ການຕິດຕາມ-ກວດກາ ແລະ ປະເມີນຜົນ

ການຕິດຕາມ-ກວດກາ ແລະ ປະເມີນຜົນ ແມ່ນວຽກທີ່ສຳຄັນຂອງການຄຸ້ມຄອງ-ບໍລິຫານໂຄງການ. ໃນບົດສະເໜີໂຄງການຈະຕ້ອງໄດ້ກຳນົດວິທີການຕິດຕາມ ແລະ ປະເມີນຜົນຂອງໂຄງການໃຫ້ລະອຽດ ໂດຍໃຫ້ຖືເປັນກິດຈະກຳໜຶ່ງຂອງໂຄງການ. ການຕິດຕາມໂຄງການຂອງທຶນ ປປດ ຈະຈັດຕັ້ງປະຕິບັດໂດຍ 2 ພາກສ່ວນຕົ້ນຕໍ ຄື:

**1). ການຕິດຕາມ-ປະເມີນຜົນໂດຍຄະນະຮັບຜິດຊອບຂອງໂຄງການທີ່ໄດ້ຮັບທຶນ:**

ຄະນະຮັບຜິດຊອບຈະຕ້ອງເອົາໃຈໃສ່ ເພື່ອຮັບປະກັນໃຫ້ໂຄງການມີຜົນໄດ້ຮັບຕາມທີ່ກຳນົດໄວ້ໃນບົດສະເໜີໂຄງການ ເຊິ່ງຈະຕ້ອງມີການຕິດຕາມ ແລະ ປະເມີນຜົນຢ່າງເປັນປົກກະຕິ (ຢ່າງໜ້ອຍ 2 ຄັ້ງ), ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການຈະໄດ້ມີການບັນທຶກ, ປະເມີນຕີລາຄາຕາມຕົວຊີ້ວັດທີ່ກຳນົດໄວ້ ແລະ ລາຍງານຢ່າງມີຄວາມໂປ່ງໃສ. ການຕິດຕາມ-ປະເມີນຜົນຈະຕ້ອງໄດ້ສຸມໃສ່ຄວາມຄືບໜ້າຂອງກິດຈະກຳ ແລະ ຄວາມໂປ່ງໃສໃນການນຳໃຊ້ງົບປະມານ, ຫາກເຫັນວ່າມີການປ່ຽນແປງ ຫຼື ມີບັນຫາ ຕ້ອງແຈ້ງເຖິງຫ້ອງການກອງເລຂາເພື່ອຮັບຊາບ ແລະ ຮ່ວມກັນແກ້ໄຂໃຫ້ທັນເວລາ.

**2). ການຕິດຕາມ-ປະເມີນຜົນໂດຍ ທີມງານວິຊາການຂອງທຶນ ປປດ**

ທີມງານວິຊາການຂອງທຶນ ປປດ ຈະມີການຕິດຕາມການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນຢ່າງປົກກະຕິ. ການຕິດຕາມຈະອີງໃສ່ການລາຍງານຂອງໂຄງການທີ່ໄດ້ຮັບທຶນ ແລະ ການຕິດຕາມຕົວຈິງຈາກສະຖານທີ່ດຳເນີນກິດຈະກຳຂອງໂຄງການ ໂດຍທີມງານ ປປດ ຈະລົງໄປຕິດຕາມ ແລະ ຕີລາຄາການຈັດຕັ້ງປະຕິບັດ 1-2 ຄັ້ງ ຫາກເຫັນວ່າຈຳເປັນອາດມີການລົງໄປຕິດຕາມ ແລະ ຊຸກຍູ້ເພີ່ມເຕີມ.

ນອກຈາກນີ້ ອາດຈະມີການຕິດຕາມ-ກວດກາຈາກພາກສ່ວນພາຍນອກ ໃນກໍລະນີຈຳເປັນ ເຊິ່ງອາດມີການຈ້າງພາກສ່ວນພາຍນອກ (ຈາກສະຖາບັນການສຶກສາ ຫຼື ສະຖາບັນຄົ້ນຄວ້າ) ເພື່ອປະເມີນຕີລາຄາ, ວັດແທກຄວາມຄືບໜ້າ ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການ.

## 10. ບັນຊີ ແລະ ການກວດສອບບັນຊີ

ບັນດາອົງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບການສະໜັບສະໜູນຈາກທຶນ ປປດ ຈະຖືກກວດສອບ (ກວດສອບບັນຊີ) ໂດຍ ທີມງານທຶນ ປປດ.

## 11. ມາດຕະການຕໍ່ໂຄງການທີ່ບໍ່ສາມາດປະຕິບັດໄດ້ຕາມເປົ້າໝາຍ

ດັ່ງທີ່ກ່າວມາຂ້າງເທິງ ທຸກໂຄງການຈະມີການຕິດຕາມ-ກວດກາຢ່າງເປັນປົກກະຕິ ຫາກເຫັນວ່າໂຄງການໃດໜຶ່ງຫາກບໍ່ສາມາດຈັດຕັ້ງປະຕິບັດກິດຈະກຳໄດ້ຕາມເປົ້າໝາຍ, ແຜນງານ ປປດ ຈະໄດ້ໂຈະການອະນຸມັດໃຫ້ທຶນງວດທີ 2. ໃນກໍລະນີທີ່ມີການໃຊ້ງົບປະມານບໍ່ຖືກເປົ້າໝາຍ ຄະນະຮັບຜິດຊອບໂຄງການທີ່ໄດ້ຮັບທຶນຈະຕ້ອງໄດ້ທົດແທນເງິນຄືນຕາມລະບຽບກົດໝາຍ.